# ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ
## (ປະຈໍາ 6 ເດືອນ ທ້າຍ ປີ 2015)

## 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດປະຈໍາ 6 ເດືອນທ້າຍປີ 2015 ທຽບກັບ 6 ເດືອນຕົ້ນປີ 2015 ທີ່ຜ່ານມາແມ່ນມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວຫຼຸດລົງ 4,24%, S&P500 -4,21% ແລະ NASDAQ -2,89%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວຫຼຸດລົງ ເນື່ອງຈາກຜູ້ລົງທຶນມີຄວາມກັງວົນຕໍ່ກັບການບໍ່ຂະຫຍາຍຕົວຂອງເສດຖະກິດໂລກ ແລະ ການປັບຕົວຫຼຸດລົງຕໍ່າສຸດຂອງ ດັດສະນີ PMI ໃນເດືອນສິງຫາທີ່ 52,9 ເຊິ່ງເປັນລະດັບຕໍ່າສຸດນັບຕັ້ງແຕ່ເດືອນ ຕຸລາ 2013 ແລະ ຜູ້ລົງທຶນຍັງມີຄວາມກັງວົນຕໍ່ທ່າທີຂອງທະນາຄານກາງ ສ.ອາເມລິກາ ຫຼື FED ທີ່ອາດຈະປະກາດຂຶ້ນອັດຕາດອກເບ້ຍໃນທ້າຍປີນີ້ ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບ ສ.ອາເມລິກາ ໃນ 6 ເດືອນທ້າຍປີ ປັບຕົວຫຼຸດລົງ ເມື່ອທຽບກັບ 6 ເດືອນຕົ້ນປີນີ້.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວຫຼຸດລົງ -8,35%, ຝຣັ່ງ (CAC40) -5,2%, ລຸກຊໍາບວກ (LUXXX) -19,31%, ອັງກິດ (FTSE100) -10% ແລະ ເຢຍລະມັນ (DAX) -8,4%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວຫຼຸດລົງ ເນື່ອງຈາກຜູ້ລົງທຶນມີຄວາມກັງວົນຕໍ່ກັບການບໍ່ຂະຫຍາຍຕົວຂອງເສດຖະກິດໂລກ ແລະ ເສດສະຖະກິດຂອງປະເທດໃນກຸ່ມເອີຣົບ ໂດຍສະເພາະການຄາດການການຂະຫຍາຍຕົວຂອງເສດຖະກິດໃນກຸ່ມເອີຣົບໄດ້ປັບຫຼຸດລົງຈາກ 1,5% ເປັນ 1,4% ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບ ເອີຣົບ ໃນ 6 ເດືອນທ້າຍປີ ປັບຕົວຫຼຸດລົງ ເມື່ອທຽບກັບ 6 ເດືອນຕົ້ນປີນີ້.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຍີ່ປຸ່ນ (NIKKEI225) ປັບຕົວຫຼຸດລົງ -6,24%, ສປ.ຈີນ (SHENZHEN) -14,01%, ສປ.ຈີນ (SHANGHAI) -18,67%, ຟີລິບປິນ (PCOMP) -9,09%, ສສ.ຫວຽດນາມ (HANOI) -9,62%, ສິງກະໂປ (STRAIT TIMES) -13,80%, ສສ. ຫວຽດນາມ (HOCHIMIN) -3%, ສ.ເກົາຫຼີ (KOSPI) -3,21%, ຮ່ອງກົງ (HANG SENG) -18,57% ແລະ ກໍາປູເຈຍ (CSX) -10,95%. ສ່ວນ ດັດຊະນີ ອາຊຽນ (ASEAN 40) -18,15%, ໄທ (SET) – 15,22% ແລະ ອິນໂດເນເຊຍ (JCI) – 9,92%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ປັບຕົວຫຼຸດລົງ ເນື່ອງຈາກ ຜູ້ລົງທຶນມີຄວາມກັງວົນຕໍ່ກັບເສດຖະກິດຂອງ ສປ. ຈີນ ເນື່ອງຈາກດັດສະນີ PMI ຂອງສ.ປ ຈີນ ປັບຕົວຫຼຸດລົງຢູ່ທີ່ລະດັບ 47,3 ໃນເດືອນ ສິງຫາ ຈາກ 47,8 ໃນເດືອນ ກໍລະກົດ ເຊິ່ງເປັນການປັບຕົວຫຼຸດລົງເປັນເດືອນທີ 6 ຕິດຕໍ່ກັນ ແລະ ຂ່າວການເຂົ້າກວດສອບບໍລິສັດຫຼັກຊັບ ຊິດຕີ້ ຊິຄຽວລິຕີ້ ເຊິ່ງເປັນບໍລິສັດຫຼັກຊັບອັນດັບ 1 ຂອງ ສປ. ຈີນ ໂດຍຄະນະກໍາມະການຄຸ້ມຄອງຫຼັກຊັບຈີນ ຈາກປັດໃຈດັ່ງກ່າວຈຶ່ງສົ່ງຜົນໃຫ້ດັດສະນີຕະຫຼາດຫຼັກຊັບ ອາຊີ ໃນ 6 ເດືອນທ້າຍປີ ປັບຕົວຫຼຸດລົງ ເມື່ອທຽບກັບ 6 ເດືອນຕົ້ນປີນີ້.

2. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນ 6 ເດືອນທ້າຍປີ ປິດຢູ່ທີ່ 1.181,30 ຈຸດ ຫຼຸດລົງ 13,15% ເມື່ອທຽບໃສ່ 6 ເດືອນທີ່ຜ່ານມາ, ຕະຫຼອດ 6 ເດືອນ ມີປະລິມານຊື້-ຂາຍຮຸ້ນທັງໝົດ 13.30 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 82.71 ຕື້ກີບ ຫຼຸດລົງ 41,87% ທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 58,01% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດທີ່ພາໃຫ້ມູນຄ່າການຊື້-ຂາຍຫຼຸດລົງ ໃນ 6 ເດືອນ ທ້າຍປີ 2015 ເນື່ອງຈາກ ແນວໂນ້ມການປັບຕົວຫຼຸດຢ່າງຕໍ່ເນື່ອງຂອງລາຄາຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ແລະ ຮຸ້ນບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ເມື່ອທຽບກັບລາຄາໃນເຄິ່ງປີທຳອິດ ເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບລາວ ປັບຕົວຫຼຸດລົງຫຼາຍເມື່ອທຽບກັບຊ່ວງຕົ້ນປີ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.742 ກີບ ຫຼຸດລົງ 939 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,6 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 9,2 ຕື້ກີບ ຫຼຸດລົງ 18,59% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 51,77% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,75%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.551 ກີບ ຫຼຸດລົງ 605 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10,76 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 70,55 ຕື້ກີບ ຫຼຸດລົງ 30,27% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງ ປະເທດສະເລ່ຍ ກວມເອົາ 57,76% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.762,66 ກີບ ຫຼຸດລົງ 795 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 31.896 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 247,59 ລ້ານກີບ ເພີ່ມຂຶ້ນ 182,15% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 38,05% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.892 ກີບ ຫຼຸດລົງ 1.123 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 0,58 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,7 ຕື້ກີບ ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 47.4% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[4]

ຮຸ້ນຂອງບໍລິສັດ ສູວັນນີໂຮມເຊັນເຕີ ມະຫາຊົນ (SVN) ໄດ້ເຂົ້າມາຊື້-ຂາຍໃນຕະຫຼາດຫຼັກຊັບລາວໃນ 6 ເດືອນທ້າຍປີນີ້ ໂດຍຊື້-ຂາຍມື້ທຳອິດແມ່ນ ວັນທີ 11 ທັນວາ 2015 ມີລາຄາຊື້-ຂາຍສະເລ່ຍ 3.260 ກີບ, ມີປະລິມານຊື້-ຂາຍທັງໝົດ 0,3 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1, ຕື້ກີບ ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 31,36% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,10%[5]

**(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**



ທ. ບຸນຈິງ ກອງຄຳ

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

## ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

(ເດືອນ ກໍລະກົດ - ທັນວາ 2015)

| | 6 ເດືອນ ຕົ້ນປີ 2015 | | | 6 ເດືອນ ທ້າຍປີ 2015 | | | % ການປ່ຽນແປງ | |
|---|---|---|---|---|---|---|---|---|
| | ຈໍານວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ລາຄາ | ຈໍານວນ(ລ້ານຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ກີບ) | ລາຄາ | ຈໍານວນ | ມູນຄ່າການຊື້ຂາຍ |
| BCEL | 1,691,707 | 11,302,105,050 | 6,300 | 1,602,294 | 9,200,745,400 | 6,100 | - 5.29 | - 18.59 |
| EDL-GEN | 14,140,572 | 101,188,641,500 | 7,050 | 10,769,811 | 70,554,675,000 | 7,300 | - 23.84 | - 30.27 |
| LWPC | 10,254 | 87,754,900 | 8,000 | 31,896 | 247,597,700 | 7,900 | 211.06 | 182.15 |
| PTL | 7,403,075 | 29,723,807,250 | 3,600 | 588,494 | 1,701,929,550 | 3,000 | - 92.05 | - 94.27 |
| SVN | | | | 309,500 | 1,009,050,000 | | | |
| ທັງໝົດ | 23,245,608 | 142,302,308,700 | | 13,301,995 | 82,713,997,650 | | - 42.78 | - 41.87 |

## ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ

(ວັນທີ 11 ມັງກອນ - 22 ທັນວາ 2015)




## ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(ເດືອນ ມິຖຸນາ - ທັນວາ 2015)



ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດສະນີ | ປະເທດ | ດັດສະນີ 6 ເດືອນທ້າຍປີ 2015 | ດັດສະນີ 6 ເດືອນຕົ້ນປີ 2015 | +/- | % |
|---|---|---|---|---|---|
| I. ສະຫະລັດ | | | | | |
| DOW | | 17.251,62 | 18.015,95 | -764,33 | -4,24 |
| NASDAQ | | 4.968,92 | 5.117,00 | -148,08 | -2,89 |
| S&P500 | | 2.021,15 | 2.109,99 | -88,84 | -4,21 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.401,94 | 1.529,65 | -127,71 | -8,35 |
| DAX | ເຢຍລະມັນ | 10.497,77 | 11.040,10 | -962,73 | -8,4 |
| FTSE100 | ອັງກິດ | 6.034,84 | 6.710,45 | -675,61 | -10,07 |
| CAC40 | ຝຣັ່ງ | 4.565,17 | 4.815,37 | -250,2 | -5,2 |
| LUXXX | ລຸກຊໍາບວກ | 1.347,066 | 1.669,49 | -322,42 | -19,31 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 1.8916,02 | 20.174,24 | -1.258,2 | -6,24 |
| KOSPI | ເກົາຫຼີໃຕ້ | 1.981,19 | 2.046,96 | -65,77 | -3,21 |
| HANG SENG | ຮ່ອງກົງ | 21.791,68 | 26.760,53 | -4.968,9 | -18,57 |
| TWSE | ໄຕ້ຫວັນ | 8.282,17 | 9.128,37 | -846,2 | -9,27 |
| SHANG HAI | ສປ. ຈີນ | 3.642,47 | 4.478,36 | -835,89 | -18,67 |
| Shenzhen | ສປ. ຈີນ | 2.357,99 | 2.742,18 | -384,19 | -14,01 |
| S&P/ASX200 | ອົດສະຕາລີ | 5.109,00 | 5.596,99 | -487,99 | -8,72 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN 40 | ອາຊຽນ | 8.281,76 | 10.118,49 | -1.836,7 | -18,15 |
| STRAIT TIMES | ສິງກະໂປ | 2.845,55 | 3.300,96 | 455,41 | -13,8 |
| SET | ໄທ | 1.264,44 | 1.491,46 | -227,02 | -15,22 |
| FBMLCI | ມາເລເຊຍ | 1.629,09 | 1.721,77 | -92,68 | -5,38 |
| JCI | ອິນໂດເນເຊຍ | 4.490,68 | 4.985,00 | -494,32 | -9,92 |
| PCOMP | ຟີລິບປິນ | 6.910,34 | 7.601,17 | -690,83 | -9,09 |
| HOCHIMIN | ສສ. ຫວຽດນາມ | 566,9 | 584,70 | -17,8 | -3,04 |
| HANOI | ສສ. ຫວຽດນາມ | 78,72 | 87,10 | -8,38 | -9,62 |
| CSX | ກໍາປູເຈຍ | 396,01 | 444,69 | -48,68 | -10,95 |
| LSX | ລາວ | 1.181,30 | 1.399,11 | -217,81 | -15,57 |
| V. ດັດສະນີກຸ່ມທະນາຄານ | | | | | |
| NASDAQBANK | ສະຫະລັດ | 2.837,52 | 2,877.47 | -39,95 | -1,39 |
| SET BANK | ໄທ | 424,6 | 508.09 | -84,05 | -16,52 |